**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

ແຂວງຈຳປາສັກ

ພະແນກອຸດສາຫະກຳ ແລະ ການຄ້າ

ຄະນະກຳມະການປະມູນໄມ້ຍຶດຂັ້ນແຂວງ

1092

ເລກທີ........../ພອຄ.ຈສ

ແຂວງຈຳປາສັກ, ລົງວັນທີ 24-09-19

## ແຈ້ງການ

ເຖິງ: - ທ່ານປະທານສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດ.

- ທ່ານປະທານສະພາການຄ້າ ແລະ ອຸດສາຫະກຳແຂວງຈຳປາສັກ.
- ສະມາຄົມປຸງແຕ່ງໄມ້ ແລະ ເຟີນີເຈີໄມ້ສຳເລັດຮູບທົ່ວປະເທດ.
- ຜູ້ອຳນວຍການໂຮງງານປຸງແຕ່ງໄມ້ ແລະ ເຟີນີເຈີໄມ້ສຳເລັດຮູບທົ່ວປະເທດ.

**ເລື່ອງ:** ການປະມູນຂາຍໄມ້ຍຶດຂອງລັດ ຢູ່ສະໜາມ **II** ແລະ **III.**

- ອີງຕາມຄຳສັ່ງຂອງນາຍົກລັດຖະມົນຕີ ສະບັບເລກທີ 15/ນຍ, ລົງວັນທີ 13/05/2016 ວ່າດ້ວຍການເພີ່ມທະວີຄວາມເຂັ້ມງວດໃນການຄຸ້ມຄອງ ແລະ ກວດກາການຂຸດຄົ້ນ, ການເຄື່ອນຍ້າຍໄມ້ ແລະ ທຸລະກິດໄມ້.
- ອີງຕາມຄຳສັ່ງແນະນຳຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 0336/ອຄ.ກຂອ, ລົງວັນທີ 13/03/2017 ເລື່ອງ: ແນະນຳການຈັດຕັ້ງປະມູນຂາຍໄມ້ທີ່ຍຶດເປັນຂອງລັດ.
- ອີງຕາມຂໍ້ຕົກລົງຂອງເຈົ້າແຂວງໆຈຳປາສັກ ສະບັບເລກທີ 1407/ຈຂ.ຈສ, ລົງວັນທີ 27/12/2016 ວ່າດ້ວຍການແຕ່ງຕັ້ງຄະນະກຳມະການຮັບຜິດຊອບປະມູນໄມ້ຍຶດຂັ້ນແຂວງ.
- ອີງຕາມບົດບັນທຶກກອງປະຊຸມຂອງຄະນະກຳມະການປະມູນໄມ້ຂັ້ນແຂວງ ຄັ້ງວັນທີ 10 ກັນຍາ 2019.

ຄະນະກຳມະການຮັບຜິດຊອບປະມູນໄມ້ຍຶດຂັ້ນແຂວງ(ພະແນກອຸດສາຫະກຳ ແລະ ການຄ້າແຂວງຈຳປາສັກ) ຂໍຖືເປັນກຽດແຈ້ງເຊີນມາຍັງບັນດາສະມາຊິກຂອງສະມາຄົມອຸດສາຫະກຳປຸງແຕ່ງໄມ້ແຫ່ງຊາດ, ບັນດາສະມາຊິກຂອງສະມາຄົມອຸດສາຫະກຳປຸງແຕ່ງໄມ້ພາຍໃນແຂວງ, ສະມາຄົມເຟີນີເຈີ, ໂຮງງານປຸງແຕ່ງໄມ້, ໂຮງງານເຟີນີເຈີ ແລະ ທຸລະກິດໄມ້ ໃນຂອບເຂດທົ່ວປະເທດ ເພື່ອເຂົ້າປະມູນຊື້-ຂາຍບ້ວງໄມ້ຍຶດ **ຈຳນວນ 5.179 ທ່ອນ/ຕັບ/ເສັ້ນ, ບໍລິມາດ 528,852 ມກ(ຫ້າຮ້ອຍຊາວແປດຈຸດແປດຮ້ອຍຫ້າສິບສອງແມັດກ້ອນ)** ເຊິ່ງມີລາຍລະອຽດດັ່ງລຸ່ມນີ້:

1. ໄມ້ຍຶດຢູ່ໂຮງງານປຸງແຕ່ງວັນນະລັງສີ ຊະນິດໄມ້ປະດົງ ຈຳນວນ 1.107 ທ່ອນສັ້ນ/ຕັບສັ້ນ, ບໍລິມາດ: 24,943 ແມັດກ້ອນ.
2. ໄມ້ຍຶດຢູ່ຫ້ອງການກະສິກຳ ແລະ ປ່າໄມ້ເມືອງສຸຂຸມາ ຊະນິດໄມ້ດູ່ ຈຳນວນ 2.368 ທ່ອນສັ້ນ/ຕັບ, ບໍລິມາດ 42,581 ແມັດກ້ອນ.
3. ໄມ້ຍຶດຢູ່ຈຸດບ້ານນ້ຳອ້ອມ, ເມືອງປະທຸມພອນ ຈຳນວນ 89 ທ່ອນ, ບໍລິມາດ 392,637ມກ, ໃນນັ້ນ:
   + ໄມ້ຍົມຜາ ຈຳນວນ 4 ທ່ອນ, ບໍລິມາດ 7,074 ມກ.
   + ໄມ້ຂາວ ຈຳນວນ 7 ທ່ອນ, ບໍລິມາດ 18,184 ມກ
   + ໄມ້ບາກ ຈຳນວນ 78 ທ່ອນ, ບໍລິມາດ 367,379 ມກ
4. ໄມ້ຍຶດຢູ່ກອງບັນຊາການ ປກສ ເມືອງປະທຸມພອນ, ຊະນິດໄມ້ດູ່ແປຮູບ ຈຳນວນ 94 ຕັບ, ບໍລິມາດ 11,829 ແມັດກ້ອນ.
5. ໄມ້ຍຶດຢູ່ກອງກວດກາປ່າໄມ້ປະຈຳແຂວງຈຳປາສັກ ຊະນິດໄມ້ດູ່ແປຮູບ ຈຳນວນ 1.162 ທ່ອນສັ້ນ/ເສັ້ນ/ຕັບ, ບໍລິມາດ 26,843 ມກ

Scanned by CamScanner

6. ໄມ້ຍຶດຢູ່ໂຮງງານປຸງແຕ່ງໄມ້ແສງຊະນະໄຊ ຊະນິດໄມ້ດູ່ ແລະ ໄມ້ປະດົງ ຈຳນວນ 359 ເສັ້ນ/ຕັບ, ບໍລິມາດ 30,019 ແມັດກ້ອນ ໃນນັ້ນ:

+ ໄມ້ດູ່ ຈຳນວນ 324 ເສັ້ນ/ຕັບ/ທ່ອນສັ້ນ, ບໍລິມາດ 28,569 ມກ.

+ ໄມ້ປະດົງ ຈຳນວນ 35 ເສັ້ນ/ຕັບ/ທ່ອນສັ້ນ, ບໍລິມາດ 1,450 ມກ

➢ ໃຫ້ບັນດາທ່ານເຂົ້າມາພົວພັນຊື້ຊອງປະມູນ ທີ່ພະແນກອຸດສາຫະກຳ ແລະ ການຄ້າແຂວງຈຳປາສັກ( ຂະແໜງການຄ້າພາຍໃນ) ໃນໂມງລັດຖະການກຳນົດ 15 ວັນ( ນັບແຕ່ວັນທີ 25 ກັນຍາ ຫາ 09 ຕຸລາ 2019 )

➢ ສຳລັບມື້ເປີດຊອງປະມູນ ແມ່ນວັນທີ 10 ຕຸລາ 2019, ເວລາ 09:00 ໂມງ ສະຖານທີ່ຫ້ອງປະຊຸມຂອງ ພະແນກອຸດສາຫະກຳ ແລະ ການຄ້າແຂວງຈຳປາສັກ.

➢ ກະລຸນາຖືຊອງປະມູນໄວ້ກັບຕົນເອງ ຈົນຮອດເວລາ 09:30 ໂມງ ຂອງວັນທີ 10 ຕຸລາ 2019 ຈຶ່ງໃຫ້ມາມອບ-ສົ່ງ ນຳຄະນະກຳມະການຮັບຜິດຊອບປະມູນໄມ້ຍຶດ ທີ່ພະແນກອຸດສາຫະກຳ ແລະ ການຄ້າແຂວງຈຳປາສັກ, ຖ້າກາຍຖືວ່າສະຫຼະສິດ.

➢ ລາຄາຊອງປະມູນ : 1.000.000 ກີບ/ຊອງ ( ສຳລັບຄ່າຊອງປະມູນນັ້ນແມ່ນບໍ່ສົ່ງຄືນ )

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອເຂົ້າຮ່ວມການປະມູນຊື້-ຂາຍໄມ້ ຕາມກຳນົດເວລາຂ້າງເທິງດ້ວຍ.

**ຮອງຫົວໜ້າພະແນກ**

**(ຄະນະຊີ້ນຳກຳມະການຮັບຜິດຊອບປະມູນໄມ້ຍຶດ)**

ກະຊວງອຸດສາຫະກຳ ແລະ ການຄ້າ
ພະແນກ
ອຸດສາຫະກຳແລະການຄ້າ
ແຂວງ ຈຳປາສັກ

**ວິໄລສອນ ແກ້ວລາສີ**

Scanned by CamScanner